*ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ*
*ສະບັບທີ 5, ເຫຼັ້ມທີ 1, ມັງກອນ-ມິຖຸນາ 2019, ເລກທະບຽນ ISSN 2521-0653*

# ປັດໄຈການກະຕຸ້ນທີ່ກະຕຸ້ນນັກຮຽນຮຽນພາສາອັງກິດທີ່ພາກວິຊາຄູພາສາອັງກິດ ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ[1]

**ຂັນທະລີ ສີດາວົງ[2]**

*ພາກວິຊາຄູພາສາ, ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ*

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງເພື່ອຊອກຫາບັນດາປັດໄຈທີ່ກະຕຸ້ນນັກສຶກສາຮຽນພາສາອັງກິດຫຼາຍທີ່ສຸດທີ່ພາກວິຊາພາສາອັງກິດ ແລະ ເພື່ອປຽບທຽບບັນດາປັດໄຈທີ່ກະຕຸ້ນນັກສຶກສາປີ 2-3 ຮຽນພາສາອັງກິດທີ່ຄະນະສຶກສາສາດ, ຈຳນວນກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາແມ່ນນັກສຶກສາປີ 2-3 ໝົດທຸກຄົນມີ 110 ຄົນ. ວິທີການສຶກສາແມ່ນໃຊ້ແບບປະລິມານ, ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາແມ່ນແບບສອບຖາມສຳລັບນັກຮຽນ, ຊຶ່ງປະກອບມີ 50 ຂໍ້ ແລະ ຄຳຖາມດັ່ງກ່າວໄດ້ປັບປ່ຽນມາຈາກຕາມຮູບແບບຂອງທ່ານ Al-Lafi (2011), Lai (2013), ແລະ Tahaineh and Daana (2013), ຊຶ່ງປະກອບມີ 3 ພາກ ແລະ 2 ປະເພດຄຳຖາມຄື: ຄຳຖາມປາຍປິດ ແລະ ຄຳຖາມປາຍເປີດ. ໂປແກລມ SPSS (17.0) ໄດ້ຖືກນຳໃຊ້ເຂົ້າໃນການວິເຄາະຂໍ້ມູນເພື່ອຊອກຫາຄ່າຄວາຄ່າສະເລ່ຍ, ຄ່າສະເລ່ຍລວມ ແລະ ຄ່າຜັນປ່ຽນມາດຕະຖານ ຂອງສີ່ປັດໄຈການກະຕຸ້ນໂດຍອີງຕາມ 4 ລະດັບຂອງ Rating scales ທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດ ແລະ ເພື່ອເປັນການປຽບທຽບບັນດາປັດໄຈການກະຕຸ້ນຂອງນັກສຶກສາປີ 2-3. ຜົນຂອງການວິໄຈພົບວ່າ ປັດໄຈສ່ວນບຸກຄົນເປັນປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດຫຼາຍທີ່ສຸດ; ນັກສຶກສາໄດ້ໃຫ້ຄຳເຫັນວ່າເຂົາເຈົ້າມາຮຽນພາສາອັງກິດກໍ່ເພາະວ່າເຂົາເຈົ້າຕ້ອງການຢາກມີອາຊີບທີ່ດີ ແລະ ຢາກມີຄວາມສາມາດນຳໃຊ້ພາສາອັງກິດໄດ້ຄ່ອງແຄ້ວ. ເຖິງແນວໃດກໍ່ຕາມ ເພດ, ອາຍຸ ແລະ ສະຖານທີ່ຮຽນຂອງງນັກສຶກສາທີ່ຮຽນຈົບກໍ່ບໍ່ໄດ້ມີຜົນຕໍ່ກັບການກະຕຸ້ນການຮຽນພາສາອັງກິດຂອງເຂົາເຈົ້າແຕ່ຢ່າງໃດ. ຮອງລົງມາກໍ່ແມ່ນປັດໄຈດ້ານຄອບຄົວ, ປັດໄຈດ້ານອາຈານ ແລະ ປັດໄຈດ້ານສັງຄົມ. ຈາກຜົນການຄົ້ນພົບການປຽບທຽບຄວາມແຕກຕ່າງບັນດາປັດໄຈການກະຕຸ້ນຂອງນັກສຶກສາປີ 2-3 ຮຽນພາສາອັງກິດແມ່ນບໍ່ມີຄວາມແຕກຕ່າງກັນ; ປັດໄຈທີ່ກະຕຸ້ນນັກສຶກສາຮຽນພາສາອັງກິດຫຼາຍທີ່ສຸດກໍ່ຍັງແມ່ນປັດໄຈສ່ວນບຸກຄົນ ແລະ ຮອງລົງມາກໍ່ແມ່ນປັດໄຈດ້ານຄອບຄົວ, ປັດໄຈດ້ານອາຈານ ແລະ ປັດໄຈດ້ານສັງຄົມ.

**ຄຳສຳຄັນ:** ການກະຕຸ້ນ, ປັດໄຈການກະຕຸ້ນ, ປັດໄຈທາງດ້ານສັງຄົມ, ປັດໃຈດ້ານອາຈານ, ປັດໃຈທາງດ້ານຄອບຄົວ

---

[1] **ການອ້າງອີງພາສາລາວ:**
ຂັນທະລີ ສີດາວົງ .(2019). ປັດໄຈການກະຕຸ້ນທີ່ກະຕຸ້ນນັກຮຽນຮຽນພາສາອັງກິດທີ່ພາກວິຊາຄູພາສາອັງກິດ ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ສະບັບທີ: 5, ເຫຼັ້ມ 1, ໜ້າທີ: 143 - 153.*

[2] **Corresponding Author**:
Khanthaly SIDAVONG. Tel: +856 20 22509559, E-mail: khanthaly276@gmail.com

# Factors Motivating students to learn English at the Souphanouvong University, Faculty of Education, Department of English

Khanthaly SIDAVONG

*Department of Language Pedagogy, Faculty of EducationF,*
*Souphanouvong University, Laos*

## ABSTRACT

This study investigated the factors motivating students to learn English at the Department of English, Faculty of Education, Souphanouvon University. The study aims were conducted to find out the factors that motivate students the most to learn English at Department of English. In addition, the study was also to compare the factors motivating year 2-3 students to learn English. The participants in this study were 110 students of year 2-3 students at the Department of English, in the FOE. The research methods employed in this study included quantitative method; the study employed a set of questionnaires for students, which consisted of 50 items. The questionnaires were adapted from Al-Lafi (2011), Lai (2013), and Tahaineh and Daana (2013) comprised of three parts with two types of questions, for instance, the multiple choice and open-ended. And then the data was analyzed through the SPSS (17.0); which calculated mean scores, average mean scores and standard deviations of 4 motivating factors based on 4-point rating scales for finding out what factor that motivate students to learn English the most and for comparing the factors that motivate year 2-3 students to learn English. The results of the study found that the strongest factor that motivated students the most to learn English was the personal factor, the students mentioned that they learnt English because they needed to get a good job, and they also desired to be fluent in English. However, students' ages, gender and the school which student's graduation from were no significant motivating to their English learning. And then it is followed by the family factor, teacher's personality and teaching style factor, and the social factor. In addition, the findings of comparison between year 2 and 3 students shown that there was no different for the strongest factor that influent both years students to learn English as the personal factors. The family factor was also the second strong factor impacting both years were similar. The third strong factor impacting was the teacher's personality/teaching style factors. These factors influent both years to learn English were slightly different. The social factor was the last factor impacted them to learn English, which were not different.

**Keywords:** Motivating, Motivating factors, the personal factors, the social factor, the family factor

## 1. ພາກສະເໜີ

ປັດຈຸບັນພາສາອັງກິດເປັນພາສາໜຶ່ງທີ່ໄດ້ຖືກນຳໃຊ້ເປັນພາສານາໆຊາດທີ່ມີຫຼາຍປະເທດໃນໂລກໄດ້ນຳໃຊ້ເປັນພາສາກາງໃນການຕິດຕໍ່ສື່ສານເຂົ້າໃນວຽກງານຕ່າງໆເຊັ່ນ: ການສຶກສາ, ເສດຖະກິດ, ວິທະຍາສາດ, ການຢາ ແລະ ອື່ນໆຢູ່ໃນປະເທດລາວຂອງພວກເຮົາແມ່ນໄດ້ນຳໃຊ້ພາສາອັງກິດເປັນພາສາຕ່າງປະເທດສຳລັບການຕິດຕໍ່ສື່ສານ. ແຕ່ປີ 1997 ປະເທດລາວຂອງພວກເຮົາໄດ້ເຂົ້າເປັນສະມາຊິກຂອງກຸ່ມອາຊຽນ, ພັກ-ລັດຖະບານເຮົາຈຶ່ງໄດ້ເຫັນບົດບາດຄວາມສຳຄັນຂອງການສຶກສາໂດຍສະເພາະກໍ່ແມ່ນການຮຽນ-ການສອນພາສາອັງກິດ. ດັ່ງນັ້ນຈຶ່ງໄດ້ນຳເອົາວິຊາພາສາອັງກິດບັນຈຸເຂົ້າຢູ່ໃນຫຼັກສູດການຮຽນ-ການສອນໃນພາກສ່ວນຕ່າງໆເຊັ່ນ: ຊັ້ນມັດທະຍົມສຶກສາ, ວິທະຍາໄລ ຕະຫຼອດຮອດມະຫາວິທະຍາໄລ; ຊຶ່ງປະຈຸບັນ ວິຊາພາສາອັງກິດໄດ້ຖືກບັນຈຸເຂົ້າໃນຫຼັກສູດຊັ້ນປະຖົມປີທີ່3 ຢູ່ໃນຂອບເຂດທົ່ວປະເທດ. ມະຫາວິທະຍາໄລສຸພານຸວົງກໍ່ແມ່ນໜຶ່ງໃນ 5 ມະຫາວິທະຍາໄລຂອງປະເທດລາວທີ່ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2003 ພາຍໃຕ້ກະຊວງສຶກສາ ແລະ ກິລາ ສຳລັບນັກຮຽນຊົນເຜົ່າຕ່າງໆທີ່ມາຈາກ 8 ແຂວງພາກເໜືອຂອງລາວ; ຊຶ່ງປະກອບມີ 6 ຄະນະວິຊາຄື: ຄະນະສຶກສາສາດ, ພາສາສາດ, ກະເສດສາດ, ເສດຖະສາດ ແລະ ການທ່ອງທ່ຽວ, ສະຖາປັດ ແລະ ວິສະວະກຳສາດ. ໃນນັ້ນຄະນະສຶກສາສາດ ກໍ່ແມ່ນຄະນະໜຶ່ງທີ່ຢູ່ໃນໃນ 6 ຄະນະວິຊາຂອງມະຫາວິທະຍາໄລສຸພານຸວົງ; ຊຶ່ງປະກອບມີສາມພາກວິຊາຄື: ພາກວິຊາພາສາອັງກິດ, ພາກວິຊາພາຄູສາລາວ ແລະ ພາກວິຊາວິຊາຄູເລກ. ຊຶ່ງໄດ້ດຳເນີນການຮຽນ-ການສອນມາເປັນເວລາ 13 ປີແລ້ວໜ້າທີ່ສຳຄັນຂອງຄະນະສຶກສາສາດແມ່ນຈັດສັນຫາຫຼັກສູດຄູສຳລັບຊັ້ນປະລິນຍາຕີ ເພື່ອຜະລິດຄູໃໝ່ສຳລັບສອນຢູ່ຊັ້ນມັດທະຍົມຢູ່ໃນ 8 ແຂວງພາກເໜືອຂອງປະເທດລາວ. ສາຂາຄູພາສາອັງກິດແມ່ນສ້າງຫຼັກສູດ ຄູພາສາອັງກິດທີ່ເປັນພາສາຕ່າງປະເທດສຳລັບຊັ້ນມັດທະຍົມຢູ່ທາງພາກ ເໜືອກໍ່ຄືແຂວງອື່ນໆໃນລາວ. ໄດ້ມີນັກຮຽນຈຳນວນຫຼາຍທີ່ຢາກມາຮຽນພາສາອັງກິດ ທີ່ພາກວິຊາ ພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລສພານຸວົງ. ອີງໃສ່ຜົນການຮຽນຂອງນັກຮຽນໃນປີ(2014) ເຫັນວ່ານັກສຶກສາສ່ວນຫຼາຍແມ່ນໄດ້ຄະແນນໃນລະດັບດີເຊັ່ນວ່າ: ນັກຮຽນຜູ້ທີ່ໄດ້ເກຼດ A ແລະ B ແມ່ນກວມເອົາ 87%. ເຫດຜົນອັນຕົ້ນຕໍສຳລັບນັກຮຽນທີ່ຢາກມາຮຽນພາສາອັງກິດອາດຈະເນື່ອງມຈາກປັດໄຈການກະຕຸ້ນ ອີກຢ່າງໜຶ່ງເມືອງຫຼວງພະບາງເປັນເມືອງມໍລະດົກໂລກ, ຊຶ່ງມີຄົນຕ່າງປະເທດເຂົ້າມາທ່ອງທ່ຽວເປັນຈຳນວນຫາຍ ແລະ ປະເທດລາວເຮົາຈະໄດ້ເຂົ້າເປັນພາກສ່ວນໜຶ່ງໃນກຸ່ມເສດຖະກິດຂອງອາຊຽນ AEC ໃນປີ 2015, ຊຶ່ງເຫດຜົນເຫຼົ່ານີ້ອາດຈະເປັນສິ່ງຈູງໃຈໃຫ້ນັກຮຽນຢາກມາຮຽນພາສາອັ່ງກິດ. ອີງຕາມປະສົບການຂອງຜູ້ສຶກສາເອງທີ່ໄດ້ສອນພາສາອັງກິດມາເປັນເວລາ 8 ປີກໍ່ຍັງຊອກຫາປັດໄຈການກະຕຸ້ນວ່າປັດໄຈໃດເປັນປັດໄຈທີ່ກະຕຸ້ນໃຫ້ນັກຮຽນຮຽນພາສາອັ່ງກິດຍັງບໍ່ທັນຮູ້ເທື່ອ ແລະ ອີກຢ່າງຫນຶ່ງປັດຈຸບັນນີ້ກໍ່ຍັງບໍ່ທັນໄດ້ມີການເຮັດການວິໄຈກ່ຽວກັບການກະຕຸ້ນການຮຽນພາສາອັງກິດຂອງນັກຮຽນທີ່ ມສ ມາກ່ອນ ສະນັ້ນມັນຈຶ່ງຈຳເປັນທີ່ຈະຊອກຫາບັນດາປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດ. ອີງຕາມທ່ານໄລໃນປີ (2013)ໄດ້ເວົ້າວ່າການກະຕຸ້ນແມ່ນໜຶ່ງໃນປັດໄຈທີ່ສຳຄັນໃນຂະບວນການຮຽນພາສາທີ່ສອງຫຼືພາສາຕ່າງປະເທດ.

ໃນການສຶກສາຄັ້ງນີ້ແມ່ນຈະໄດ້ເນັ້ນຢູ່ 4 ປັດໄຈຫຼັກຄື: ປັດໄຈສ່ວນບຸກຄົນ, ປັດໄຈດ້ານທາງດ້ານສັງຄົມ, ປັດໄຈທາງດ້ານອາຈານ ແລະ ປັດໄຈທາງດ້ານຄອບຄົວ. ຈຸດປະສົງແມ່ນເພື່ອສືບຫາປັດໄຈທີ່ໄປກະຕຸ້ນໃຫ້ນັກສຶກສາມາຮຽນພາສາອັງກິດຫຼາຍກວ່າໝົດຢູ່ພາກວິຊາຄູພາສາອັງກິດ, ຄະນະ ສຶກສາສາດ, ມະຫາວິທະຍາໄລສຸພານຸວົງ ແລະ ເພື່ອປຽບທຽບບັນດາປັດໄຈທີ່ກະຕຸ້ນນັກສຶກສາປີ 2-3 ໃນການຮຽນພາສາອັງກິດໃນຄະນະສຶກສາສາດ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ການສຶກສາຄັ້ງນີ້ເປັນການສຶກສາແບບສໍາຫຼວດ, ຊຶ່ງເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນໃຊ້ແບບສອບຖາມສໍາລັບນັກສຶກສາ ເພື່ອສໍາຫຼວດຫາບັນດາປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດທີ່ຄະນະສຶກສາສາດ, ພາກວິຊາພາສາອັງກິດ; ຊຶ່ງປະກອບມີ 50 ຂໍ້ ແລະ ຄໍາຖາມດັ່ງກ່າວໄດ້ສ້າງຂຶ້ນໂດຍອີງໃສ່ທິດສະດີກ່ຽວກັບບັນດາບັດໄຈການກະຕຸ້ນ ແລະ ໄດ້ດັດແປງມາຈາກຕາມຮູບແບບຂອງທ່ານ Al-Lafi(2011),Lai(2013) ແລະ Tahaineh & Daana (2013) ໂດຍອີງໃສ່ສະພາບຄວາມເປັນຈິງຂອງນັກສຶກສາ. ແບບສອບຖາມປະກອບມີສາມພາກຄື:

ພາກທີ 1: ຂໍ້ມູນສ່ວນບຸກຄົນລວມມີ 15 ຂໍ້; ຊຶ່ງຈະຖາມກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມເຊັ່ນ: ອາຍຸ, ເພດ, ຊັ້ນຮຽນ, ສະຖານະຄອບຄົວ, ການສຶກສາຂອງພໍ່ແມ່ ແລະ ໂຮງຮຽນທີ່ຮຽນຈົບຂອງນັກສຶກສາ.

ພາກທີ 2: ຂໍ້ມູນກ່ຽວກັບບັນດາປັດໄຈການກະຕຸ້ນປະກອບມີ 39 ຂໍ້; ຊຶ່ງຈະຖາມກ່ຽວກັບບັນດາປັດໄຈການກະຕຸ້ນທີ່ກະຕຸ້ນນັກສຶກສາຮຽນພາສາອັງກິດດັ່ງລາຍລະອຽດໃນຕາຕະລາງລຸ່ມນີ້:

**ຕາຕະລາງ 1: ຂໍ້ຄໍາຖາມຂອງແບບສອບຖາມ**

| ລ/ດ | ປັດໄຈການກະຕຸ້ນ | ຂໍ້ຄໍາຖາມອັນດັບທີ່ | ຈໍານວນຂໍ້ຄໍາຖາມ |
|---|---|---|---|
| 1 | ປັດໄຈສ່ວນບຸກຄົນ | 1-15 | 15 |
| 2 | ປັດໄຈທາງດ້ານສັງຄົມ | 16-23 | 8 |
| 3 | ປັດໄຈທາງດ້ານອາຈານ | 24-31 | 8 |
| 4 | ປັດໄຈທາງດ້ານຄອບຄົວ | 32-39 | 8 |
| | **ລວມ** | | **39** |

ຜູ້ຕອບແບບສອບຖາມແມ່ນໄດ້ຕອບຄໍາຖາມໂດຍການນໍາໃຊ້ 4 ລະດັບ ຂອງ Rating scale ຄື (1) “ ເຫັນດີທີ່ສຸດ”; (2) “ ບໍ່ເຫັນດີ”; (3) “ ເຫັນດີ”; (4) “ ບໍ່ເຫັນດີທີ່ສຸດ” ສໍາລັບຄໍາຕອບທີ່ເຫັນວ່າຖືກຕ້ອງຕາມສະພາບຄວາມເປັນຈິງຂອງຜູ້ຕອບແບບສອບຖາມ.

ພາກທີ່ 3: ແມ່ນການສອບຖາມກ່ຽວກັບຄວາມຄິດເຫັນຂອງນັກສຶກສາກ່ຽວກັບປັດໄຈການກະຕຸ້ນໃຫ້ເຂົາເຈົ້າມາຮຽນພາສາອັງກິດ; ຊຶ່ງປະກອບມີ 5 ຂໍ້.

**2.2 ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງແມ່ນແມ່ນຈະເລືອກເອົາສະເພາະແຕ່ນັກສຶກສາທັງໝົດຂອງປີ 2-3 ຂອງພາກວິຊາຄູພາສາອັງກິດລວມທັງໝົດມີ 110 ຄົນ; ຊຶ່ງປີ 3 ມີ ປີ 1ມີ1ຫ້ອງ ແລະ ປີ 2 ມີ 2 ຫ້ອງ. ເຫດຜົນຂອງການເອົາແຕ່ປີ 2-3 ກໍ່ຍ້ອນວ່າຊ່ວງທີ່ໄປເກັບກຳຂໍ້ມູນນັກສຶກສາປີໜຶ່ງຍັງບໍ່ທັນເຂົ້າຮຽນ ແລະ ນັກສຶກສາປີທີ່ສີ່ແມ່ນໄປລົງຝຶກຫັດງານຢູ່ 8 ແຂວງພາກເໜືອສະນັ້ນຈຶ່ງໄດ້ເອົາແຕ່ສອງຊັ້ນຮຽນ.

**2.3 ວິທີການດຳເນີນການຮວບຮວມຂໍ້ມູນ**

ໃນການດຳເນີນການຮວບຮວມຂໍ້ມູນຜູ້ສຶກສາໄດ້ດຳເນີນໄປຕາມຂັ້ນຕອນຄື:

1. ຫຼັງຈາກສ້າງແບບສອບຖາມສຳເລັດແລ້ວຜູ້ສຶກສາກໍ່ໄດ້ນຳເອົາແບບສອບຖາມໄປຜ່ານທາງວິຊາການເພື່ອກວດສອບໃຫ້ມີປະສິດພາບ.

2.ໄດ້ນຳເອົາແບບສອບຖາມໄປທົດສອບກັບນັກສຶກສາທີ່ບໍ່ແມ່ນກຸ່ມຕົວຢ່າງເພື່ອໃຫ້ແບບສອບຖາມມີປະສິດທິພາບ.

3. ຜູ້ຄົ້ນຄວ້າໄດ້ຂໍໜັງສືສະເໜີຈາກຄະນະບໍດີ ຄະນະພາສາສາດ ມະຫາວິທະຍາໄລແຫ່ງຊາດ ສະເໜີຕໍ່ຄະນະບໍດີ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ ເພື່ອຂໍອະນຸຍາດລົງເກັບກຳຂໍ້ມູນ.

4. ຫັງຈາກນັ້ນກໍ່ໄດ້ໄປຮວບຮວມຂໍ້ມູນນຳນັກສຶກສາທີ່ເປັນກຸ່ມຕົວຢ່າງ.

5. ນຳເອົາຜົນຂອງແບບສອບຖາມທັງໝົດໄປວິເຄາະ ແລະ ອະທິບາຍຜົນ.

**2.4 ວິທີວິເຄາະຂໍ້ມູນ**

ຫຼັງຈາກຮວບຮວມຂໍ້ມູນໄດ້ແລ້ວກໍ່ນຳເອົາຂໍ້ມູນໄປວິເຄາະຕາມສີ່ປັດໄຈການກະຕຸ້ນດັ່ງນີ້:

1. ຫາຄ່າສະເລ່ຍ, ຄ່າສະເລ່ຍລວມ, ຄ່າຜັນປ່ຽນມາດຕະຖານ (S.D) ຂອງຄະແນນຜູ້ຕອບແບບສອບຖາມຕາມສີ່ລະດັບຂອງ Rating scale ເພື່ອຊອກຫາບັນດາປັດໄຈທີ່ກະຕຸ້ນນັກສຶກສາຮຽນພາສາອັງກິດໂດຍໄດ້ໃຊ້ໂປແກລມ SPSS (17.0).

2. ແລະເພື່ອປຽບທຽບຄວາມແຕກຕ່າງລະຫວ່າງປັດໄຈການກະຕຸ້ນທີ່ກະຕຸ້ນນັກສຶກສາປີ 2-3 ຮຽນພາສາອັງກິດ.

**3. ຜົນໄດ້ຮັບ**

ຜົນໄດ້ຮັບຈາກການວິເຄາະແບບສອບຖາມນັກສຶກສາກ່ຽວກັບບັນດາປັດໄຈການກະຕຸ້ນທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດແມ່ນໄດ້ລະບຸຢູ່ໃນແຜນພາບທີ່ 1 ພົບວ່າປັດໄຈສ່ວນບຸກຄົນແມ່ນປັດໄຈທີ່ກະຕຸ້ນໃຫ້ນັກສຶກສາມາຮຽນພາສາອັງກິດຫຼາຍກວ່າໝູ່; ຊຶ່ງມີຄ່າສະເລ່ຍເທົ່າກັບ 3.45; ຊຶ່ງນອນຢູ່ໃນເກນຄ່າລະດັບຄະແນນທີ່ສູງຫຼາຍກວ່າໝູ່ໃນບັນດາສີ່ປັດໄຈການກະຕຸ້ນ.

ຜົນໄດ້ຮັບຈາກການປຽບທຽບບັນດາປັດໄຈການກະຕຸ້ນຂອງນັກສຶກສາປີ 2-3 ແມ່ນໄດ້ລະບຸຢູ່ໃນແຜນພາບທີ່ 2 ພົບວ່າ ປັດໄຈການກະຕຸ້ນໃຫ້ນັກສຶກສາມາຮຽນພາສາອັງກິດແມ່ນບໍ່ມີຄວາມແຕກຕ່າງກັນ; ຊຶ່ງປັດໄຈສ່ວນບຸກຄົນກໍ່ຍັງແມ່ນປັດໄຈທີ່ມີຄ່າສະເລ່ຍສູງກວ່າປັດໄຈອື່ນໆ; ຊຶ່ງ ປີ 2 ມີຄ່າສະເລ່ຍທໍ່າກັບ 3.49 ແລະ ປີ 3 ມີຄ່າສະເລ່ຍແມ່ນ 3.38 ແລະ ຄະແນນສະເລ່ຍລວມຂອງທັງສອງປີແມ່ນນອນຢູ່ໃນເກນຄ່າລະດັບທີ່ສູງກວ່າໝູ່ໃນບັນດາສີ່ປັດໄຈ.




**ແຜນພາບ 1:** ແຜນພາບລວມຂອງສີ່ປັດໄຈການກະຕຸ້ນນັກສຶກສາຮຽນພາສາອັງກິດ.

**ຕາຕະລາງ 2:** ຜົນການວິເຄາະປັດໄຈສ່ວນບຸກຄົນ

| ລ/ດ | **ປັດໄຈສ່ວນບຸກຄົນ** ຂ້ອຍຢາກຮຽນພາສາອັງກິດກໍ່ຍ້ອນວ່າ: | ກຸ່ມຕົວຢ່າງ | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ແປຄວາມໝາຍ |
|---|---|---|---|---|---|
| 4 | ຂ້ອຍປາຖະໜາຢາກມີຄວາມຄ່ອງແຄ້ວໃນການນຳໃຊ້ພາສາອັງກິດ | 110 | 3.64 | 0.51 | ສູງຫຼາຍ |
| 9 | ຂ້ອຍຄິດວ່າພາສາອັງກິດເປັນຜົນປະໂຫຍດໃນການຊອກຫາອາຊີບທີ່ດີ | 110 | 3.70 | 0.68 | ສູງຫຼາຍ |
| 13 | ຂ້ອຍຢາກຄົ້ນຫາຂໍ້ມູນຕ່າງໆທາງອິນເຕີເນັດເປັນພາສາອັງກິດ | 110 | 3.62 | 0.53 | ສູງຫຼາຍ |
| | ລວມ | 110 | 3.45 | 0.35 | ສູງຫຼາຍ |

**ຕາຕະລາງ 3:** ຜົນການວິເຄາະປັດໄຈທາງດ້ານຄອບຄົວ

| ລ/ດ | **ປັດໄຈດ້ານຄອບຄົວ** ຂ້ອຍຢາກຮຽນພາສາອັງກິດກໍ່ຍ້ອນວ່າ: | ກຸ່ມຕົວຢ່າງ | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ແປຄວາມໝາຍ |
|---|---|---|---|---|---|
| 33 | ພໍ່ແມ່ສົ່ງເສີມໃຫ້ມາຮຽນພາສາອັງກິດ | 110 | 3.35 | 0.71 | ສູງຫຼາຍ |
| 35 | ພໍ່ແມ່ຂອງຂ້ອຍຄິດວ່າພາສາອັງກິດມີຄວາມສໍາຄັນຕໍ່ຂ້ອຍຫຼາຍສໍາລັບການສຶກສາໃນລະດັບທີ່ສູງກວ່າໃນອະນາຄົດ. | 110 | 3.44 | 0.65 | ສູງຫຼາຍ |
| 37 | ພໍ່ແມ່ຂອງຂ້ຍຍຄິດວ່າຫຼັງຈາກຂ້ອຍສໍາລັດການສຶກສາແລ້ວຂ້ອຍຈະມີວຽກເຮັດງານທໍາທີ່ດີ | 110 | 3.55 | 0.65 | ສູງຫຼາຍ |
| | ລວມ | 110 | 3.19 | 0.47 | ສູງຫຼາຍ |




**ແຜນພາບທີ່ 2.** ຜົນການວິເຄາະການປຽບທຽບຂອງສີ່ປັດໄຈທີ່ກະຕຸ້ນນັກສຶກສາປີ 2-3 ຮຽນພາສາອັງກິດ

## 4. ວິຈານຜົນ

ຈາກການສະຫຼຸບຜົນການຄົ້ນຄວ້າປັດໄຈການກະຕຸ້ນທີ່ກະຕຸ້ນນັກສຶກສາປີ 2-3 ຮຽນພາສາອັງກິດທີ່ພາກວິຊາພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ. ສາມາດອະພິປາຍຜົນໄດ້ດັ່ງນີ້ປັດໄຈທີ່ກະຕຸ້ນນັກສຶກສາປີ 2-3 ຮຽນພາສາອັງກິດຫຼາຍທີ່ສຸດກໍ່ແມ່ນປັດໄຈສ່ວນບຸກຄົນທີ່ມີຄ່າສະເລ່ຍລວມເທົ່າກັບ (M=3.45); ຊຶ່ງຢູ່ໃນເກນຄະແນນໃນລະດັບທີ່ສູງຫຼາຍ ແລະ ສູງກວ່າໝູ່ໃນສີ່ປັດໄຈ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ ວົງວິຫານປີ (2010) ທີ່ໄດ້ຄົ້ນພົບວ່າປັດໄຈສ່ວນບຸກຄົນເປັນປັດໄຈມີສໍາຄັນຕໍ່ກັບການຮຽນຂອງນັກສຶກສາ, ຊຶ່ງມັນຄື ຄວາມຕ້ອງການ, ຄວາມເຊື່ອ ແລະ ເປົ້າໝາຍ. ຄວາມຕ້ອງການສ່ວນບຸກຄົນຂອງນັກສຶກສາແມ່ນປັດໄຈຫຼັກທີ່ກະຕຸ້ນໃຫ້ພວກເຂົາຮຽນພາສາອັງກິດ. ແຕ່ໃນຄວາມເປັນຈິງແລ້ວກໍ່ມີຫຼາຍປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດເຊັ່ນປັດໄຈທາງຄອບຄົວເປັນແຮງກະຕຸ້ນໃນການສະໜັບສະໜູນການຮຽນຂອງລູກໆ ແຕ່ເຖິງແມ່ນວ່າຈະມີຫຼາຍປັດໄຈທີ່ເປັນສິ່ງກະຕຸ້ນໃຫ້ນັກສຶກສາຮຽນກໍ່ຕາມ ແຕ່ສິ່ງສໍາຄັນກໍ່ຍັງແມ່ນຕົວຂອງບຸກຄົນເອງເປັນຜູ້ຕັດສິນວ່າຕົນຈະຮຽນໃຫ້ສໍາເລັດຫຼືບໍ່. ດັ່ງນັ້ນປັດໄຈສ່ວນບຸກຄົນເປັນປັດໄຈອັນຕົ້ນຕໍທີ່ກະຕຸ້ນນັກສຶກສາປະສົບຜົນສໍາເລັດໃນການຮຽນພາສາອັງກິດ.

ປັດໄຈທາງຄອບຄົວມີຄະແນນສະເລ່ຍລວມແມ່ນ (M=3.19); ຊຶ່ງຢູ່ໃນເກນຄະແນນໃນລະດັບສູງ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Krishnan, Al-Lafi and Pathan's(2013) ພົບວ່າຄອບຄົວເປັນປັດໄຈທີ່ສໍາຄັນທີ່ສຸດທີ່ກະຕຸ້ນໃນການຮຽນພາສາອັງກິດຂອງລູກໆ ແຕ່ໃນຄວາມເປັນຈິງແລ້ວພໍ່ແມ່ກໍ່ເປັນພຽງແຮງຊຸກດັນໃຫ້ລູກໄປເຖິງຈຸດໝາຍແຕ່ພໍ່ແມ່ບໍ່ສາມາດເປັນຜູ້ກໍານົດ ວິຊາຮຽນຂອງລູກໄດ້ເຖິງແມ່ນວ່າພໍ່ແມ່ຢາກສົ່ງເສີມໃຫ້ລູກຮຽນພາສາອັງກິດເກັ່ງຫຼືເປັນນັກແປພາສາທີ່ເກັ່ງກໍ່ຄົງເປັນໄປໄດ້ຍາກຖ້າວ່າລູກບໍ່ມັກຮຽນພາສາອັງກິດ ເຖິງແມ່ນວ່າຝືນຮຽນໄປກໍ່ເປັນໄປໄດ້ຍາກ ແລະ ບໍ່ປະສົບຜົນສໍາເລັດໃນການຮຽນ ແລະ ມີນັກສຶກສາບາງຄົນກໍ່ອອກໂຮງຮຽນຍ້ອນຮຽນບໍ່ໄດ້ເພາະວ່າຖືກພໍ່ແມ່ບັງຄັບໃຫ້ຮຽນ.

ປັດໄຈທາງດ້ານອາຈານມີຄະແນນສະເລ່ຍເທົ່າກັບ (M=3.01); ຊຶ່ງຢູ່ໃນເກນຄະແນນໃນລະດັບສູງ ແລະ ສອດຄ່ອງກັບ ທ່ານ Hussin, Maarof, and D'Cruz (2001) ໄດ້ເວົ້າວ່າ ຄູຈໍາຕ້ອງໄດ້ຊອກຫາວິທີສິດສອນຫຼາຍວິທີເພື່ອເປັນການເພີ່ມທະວີການກະຕຸ້ນໃຫ້ນັກສຶກສາຮຽນໃນການຮຽນພາສາອັງກິດ, ມີວິທີສິດສອນທີ່ຫຼາກຫຼາຍທີ່ວ່າຄູສອນພາສາອັງກິດສາມາດນໍາໃຊ້ເພື່ອກະຕຸ້ນນັກສຶກສາ ຮຽນພາສາອັງກິດໃນຫ້ອງຮຽນ ແລະ ຄູຄວນໃຊ້ວິທີທີ່ ເໝາະສົມກັບເນື້ອໃນບົດຮຽນ ແລະ ລະດັບຂອງຜູ້ຮຽນ. ປັດຈຸບັນຢູ່ພາກວິຊາຄູພາສາອັງກິດ, ຄະນະສຶກສາສາດໄດ້ມີຄູສອນພາສາອັງກິດຫຼາຍທ່ານທີ່ໄດ້ສໍາເລັດການການສຶກສຶກສາລະດັບ ປະລິນຍາໂທຈາກຕ່າງປະເທດ; ຊຶ່ງໄດ້ນໍາໃຊ້ຫຼາຍວິທີສອນ ທີ່ແຕກຕ່າງ ແລະ ສາມາດສ້າງຫຼາຍກິດຈະກໍາທີ່ແທດເໝາະກັບສະພາບຕົວຈິງ ແລະ ລະດັບຂອງນັກສຶກສາ ຊຶ່ງສິ່ງເຫຼົ່ານີ້ອາດຈະເປັນການກະຕຸ້ນໃຫ້ນັກສຶກສາຢາກຮຽນພາສາ.

ປັດໄຈທາງສັງຄົມມີຄະແນນສະເລ່ຍແມ່ນ (M=2.95); ຊຶ່ງຢູ່ໃນເກນຄະແນນໃນລະດັບສູງ ແລະ ຜົນການຄົ້ນຄວ້າສອດຄ່ອງກັບ ທ່ານ Al-Lafi (2011) ພົບວ່າປັດໄຈທາງດ້ານສັງຄົມເປັນປັດໄຈທີ່ສໍາຄັນທີ່ກະຕຸ້ນໃນການຮຽນພາສາຂອງນັກຮຽນ. ຊຶ່ງສາເຫດຂອງນັກສຶກສາທີ່ມາຮຽນພາສາອັງກິດອາດຈະເນື່ອງມາຈາກ ເມືອງຫຼວງພະບາງເປັນເມືອງມໍລະດົກໂລກ, ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວຊົມເປັນຈໍານວນຫຼາຍ ແລະ ມີສະຖານທີ່ເຮັດວຽກຫຼາຍແຫ່ງທີ່ຕ້ອງການພະນັກງານຜູ້ມີຄວາມຮູ້ທາງດ້ານພາສາອັງກິດ ນີ້ອາດຈະເປັນເຫດຜົນອັນຕົ້ນຕໍທີ່ເຮັດໃຫ້ຜູ້ຄົນມີໂອກາດທີ່ດີໃນການຊອກຫາວຽກເຮັດງານທໍາ. ດັ່ງນັ້ນຈຶ່ງມີຫຼາຍຄົນເລືອກຮຽນວິຊານີ້.

ສ່ວນຜົນການຄົ້ນພົບຈາກການປຽບທຽບລະຫວ່າງປັດໄຈການກະຕຸ້ນທີ່ກະຕຸ້ນນັກຮຽນປີ 2-3

ຮຽນພາສາອັງກິດພົບວ່າ ປັດໄຈທີ່ກະຕຸ້ນໃຫ້ນັກຮຽນທັງສອງປີຮຽນບໍ່ມີຄວາມແຕກຕ່າງກັນປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດຫຼາຍກວ່າໝູ່ນັ້ນກໍ່ຍັງແມ່ນປັດໄຈສ່ວນບຸກຄົນຢູ່ໃນເກນທີ່ສູງກວ່າໝູ່ໃນສີ່ປັດໄຈການກະຕຸ້ນ; ມີຄະແນນສະເລ່ຍລວມແມ່ນ (M=3.49, 3.48); ຊຶ່ງໃນຄວາມເປັນຈິງນັກສຶກສາທີ່ເລືອກຮຽນພາສາອັງກິດຢູ່ພາກວິຊາພາສາອັງກິດຄະນະສຶກສາສາດແມ່ນຍ້ອນຄວາມມັກຮັກໃນວິຊານີ້.

ຜົນການຄົ້ນພົບຈາກການສອບຖາມຄຳຄິດເຫັນຂອງນັກສຶກສາຕໍ່ກັບປັດໄຈອື່ນໆນອກຈາກສີ່ປັດໄຈທີ່ກະຕຸ້ນໃຫ້ເຂົາເຈົ້າມາຮຽນພາສາອັງກິດວ່າປັດໄຈທາງດ້ານສະພາບແວດລ້ອມໂຮງຮຽນ ແລະ ປັດໄຈດ້ານສະພາບແວດລ້ອມໃນການຮຽນກໍ່ມີສ່ວນທີ່ເປັນສິ່ງຈູງໃຈໃຫ້ເຂົາເຈົ້າຢາກມາຮຽນພາສາັງກິດ ແຕ່ປັດໄຈຕົ້ນຕໍກໍ່ຍັງແມ່ນປັດໄຈສ່ວນບຸກຄົນເປັນສິ່ງຈູງໃຈໃຫ້ນັກສຶກສາປະສົບຜົນສຳເລັດໃນການຮຽນພາສາ.

## 5. ສະຫຼຸບຜົນຜົນການວິໄຈ

ຈາກການສຶກສາປັດໄຈການກະຕຸ້ນນັກຮຽນພາສາອັງກິດທີ່ຄະນະສຶກສາສາດ,ພາກວິຊາພາສາອັງກິດສາມາດສະຫຼຸບໄດ້ວ່າປັດໄຈທີ່ກະຕຸ້ນໃຫ້ນັກສຶກສາຮຽນພາສາອັງກິດຫຼາຍກວ່າໝູ່ແມ່ນປັດໄຈສ່ວນບຸກຄົນນັກສຶກສາໄດ້ໃຫ້ຄຳເຫັນວ່າເຂົາເຈົ້າມາຮຽນພາສາອັງກິດກໍ່ເພາະວ່າເຂົາເຈົ້າຕ້ອງການຢາກມີວຽກເຮັດງານທຳທີ່ດີ ແລະ ເຂົາເຈົ້າຢາກມີຄວາມສາມາດຄ່ອງແຄ້ວໃນການນຳໃຊ້ພາສາອັງກິດ; ເຖິງແນວໃດກໍ່ຕາມເພດ, ອາຍຸແລະສະຖານທີ່ໂຮງຮຽນຂອງນັກຮຽນຈົບແມ່ນບໍ່ມີຜົນຕໍ່ການຮຽນພາສາອັງກິດຂອງນັກຮຽນແຕ່ຢ່າງໃດ, ປັດໄຈທີ່ສອງແມ່ນປັດໄຈທາງດ້ານຄອບຄົວ ໃນນີ້ການສຶກສາ ແລະ ພື້ນຖານເສດຖະກິດຂອງພໍ່ແມ່ກໍ່ບໍ່ເປັນຜົນສະທ້ອນຕໍ່ການຮຽນພາສາອັງກິດຂອງເຂົາເຈົ້າ, ປັດໄຈທີ່ສາມແມ່ນປັດໄຈທາງດ້ານອາຈານ ແລະປັດໄຈທີ່ສີ່ກໍ່ຄືປັດໄຈທາງດ້ານສັງຄົມ.

ຜົນການຄົ້ນພົບຈາກການປຽບທຽບລະຫວ່າງປັດໄຈການກະຕຸ້ນທີ່ກະຕຸ້ນນັກຮຽນປີ 2-3 ຮຽນພາສາອັງກິດພົບວ່າປັດໄຈທີ່ກະຕຸ້ນໃຫ້ນັກຮຽນທັງສອງປີຮຽນຫຼາຍກວ່າໝູ່ນັ້ນກໍ່ຍັງແມ່ນປັດໄຈສ່ວນບຸກຄົນ. ນັກຮຽນທັງສອງຊັ້ນຮຽນໄດ້ໃຫ້ຄຳເຫັນວ່າພວກເຂົາເຈົ້າຢາກມາຮຽນພາສາອັງກິດກໍ່ເພາະວ່າພາສາອັງກິດມີຜົນປະໂຫຍດໃນການ ຊອກຫາອາຊີບທີ່ດີ, ປັດໄຈທີ່ສອງກໍ່ຍັງແມ່ນປັດໄຈທາງຄອບຄົວທັງສອງຊັ້ນຮຽນໄດ້ໃຫ້ຄຳເຫັນວ່າພໍ່ແມ່ຂອງເຂົາເຈົ້າໄດ້ໃຫ້ຄຳແນະນຳເຂົາເຈົ້າວ່າຫຼັງຈາກຮຽນຈົບເຂົາເຈົ້າສາມາດຊອກຫາວຽກເຮັດງານທຳໄດ້ງ່າຍ, ປັດໄຈທີ່ສາມແມ່ນປັດໄຈທາງດ້ານອາຈານຕໍ່ກັບປັດໄຈດັ່ງກ່າວນີ້ນັກສຶກສາທັງສອງຊັ້ນຮຽນໄດ້ໃຫ້ຄຳຄິດເຫັນທີ່ແຕກຕ່າງກັນລະຫວ່າງຄຳຖາມຍ່ອຍເຊັ່ນວ່າ: ນັກສຶກສາປີສອງໄດ້ເວົ້າວ່າການນຳໃຊ້ສື່ການສອນທີ່ຫຼາກຫຼາຍເພື່ອຊ່ອຍໃນການອະທິບາຍບົດຮຽນ,ການໃຫ້ຄະແນນ ແລະ ການຕິບມືຊົມເຊີຍຫຼັງຈາກທີ່ເຂົາເຈົ້າໄດ້ຕອບຄຳຖາມຂອງຄູກໍ່ເປັນການກະຕຸ້ນໃຫ້ເຂົາເຈົ້າຢາກຮຽນພາສາຫຼາຍຂຶ້ນ. ນັກສຶກສາປີສາມໄດ້ໃຫ້ຄຳເຫັນວ່າ ການສ້າງກິດຈະກຳທີ່ແທດເໝາະກັບລະດັບ ແລະ ເໝາະກັບສະພາບຄວາມເປັນຈິງຂອງນັກສຶກສາ, ການມີມະນຸດສຳພັນດີ ແລະ ການມີຄວາມຍຸຕິທຳຕໍ່ກັບນັກສຶກສາທຸກຄົນໃນຫ້ອງກໍ່ແມ່ນການກະຕຸ້ນໃຫ້ເຂົາເຈົ້າຢາກຮຽນພາສາ. ສຳລັບປັດໄຈທີ່ສີ່ ແມ່ນປັດໄຈທາງສັງຄົມທີ່ກະຕຸ້ນໃຫ້ນັກສຶກສາທັງສອງປີຮຽນ ຮຽນພາສາອັງກິດແມ່ນຄືກັນ.

## 6. ຄຳຂອບໃຈ

ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງທ່ານ ອາຈານ ລະດົມຈັນ ຂັນຕິ ທີ່ໄດ້ໃຫ້ຄວາມຊ່ອຍເຫຼືອໃນການຊີ້ນຳນຳພາ, ໃຫ້ຄຳປຶກສາ ຂຽນບົດວິທະຍານິພົນຕັ້ງແຕ່ຕົ້ນຈົນສຳເລັດ ແລະ ສະແດງຄວາມຮູ້ບຸນຄຸນມາຍັງໂຄງການ ADB ທີ່ໄດ້ໃຫ້ທຶນການສຶກສາຮຽນຕໍ່ລະດັບປະລິນຍາໂທຄັ້ງນີ້ຈົນສຳເລັດຜົນໄປດ້ວຍດີ, ຂໍຂອບໃຈມານຳຄະນະບໍດີ ຄະນະສຶກ

ສາສາດ ແລະ ນັກສຶກສາ ພາກວິຊາພາຄູສາອັງກິດ ປີ 2-3 ທີ່ໄດ້ໃຫ້ຄວາມຮ່ວມມືຊ່ວຍເຫຼືອໃນການເກັບຂໍ້ມູນໃນຄັ້ງນີ້ເປັນຢ່າງສູງ.

## 7. ເອກະສານອ້າງອີງ


Al-Lafi, Q. (2011). Factors that motivate 10th grade Jordanian students to learn the English language in the Arab model school.

Atsuta,H.(2003). Improving themotivation of unsuccessful in the Japanese high school EFL context.ERICdocument Reproduction Service No. ED 476 750.

Bayar,Ph.D.(2014). The factors influencing the Motivational Strategy Use of Non-native English Teachers.

Brown, H. (2007). Teaching by principles, an interactive approach toLanguage pedagogy(3rded.p85). SanFrancisco State University.

Brown, H.D. 2001. Teaching by principles (2nded). Longman.

Chamber, G.N.1999.Motivating Language learners. Multilingual Matters.

Cheng, S.K (1993). Measuring motivation to learn Chinese and English through self-reported feeling and behavior. Singapore Journal of Education, 13(1).85-109.

Dörnyei, Z. (1998). Motivation in Second and Foreign Language learning. Language Teaching, 33,(3),pp 117-135.Retrieved from http://journals.cambridge.org/

Dörnyei, Z., and Csize´r, K. 1998. Then Commandments for Motivating Language Learners:Results of an Empirical Study. Language Teaching Reasearch 2 (3), 203-229.

Ebata, M. (2008). Motivation Factors in Language learning. The internet TESL Journal. Retrieved from http://iteslj.org/

Garland, R. (1991). The Mid-point on a Rating Scales: It is Desirable?. Retrieved from http://rangevoting/

Graddol, D. (2006). *English Next. The Britishouncial.*

Hussin, S., Maarof, N., &D'Cruz, J.(2001). Sustaining an interest in learning English and Increasing the motivation to learn English: an enrichment program. The Internet TESL.Journal, 7 (5).Retrieved from http://iteslj.org/Techniques/Hussin-Motivation.

Krashen, D. Stephen. 1981. Second language Acquisition and Second language learning.Oxford. Pergramon Press.

Krishnan,K.,Al-Lafi, Q., &Pathan,Z.(2013) Motivational Factors that impact English language learning in an Arab Model school, Jordan: An Empirical Investigation.

Lai, H. (2013). The motivation of learners of English as a foreign Language revisited.URL:Retrievedfrom http://dx.doi.org/10.5539/ies.v5n10p90

Phothijak, N. (2006) The use of English camp as a means in motivating students' Englishlearning.

Solak, E and Bayar, A. (2014) The Factors influencing the motivational strategy Use of Non-Native English teachers.

Thaineh, Y andDaana, H. (2013).Jodanian Undergraduates' Motivations and attitudes towards learning English in EFL Context.

Trawinski, Mariusz. 2005. An outline of Second language Acquisition Theories. Wydanictwo Wydanictwo Naukowe Ap. Krakow.

Vongvihan, P. (2010). Factors motivating chief Executive offices to participate in the English language learning at the National Academy of politic and public administration.

Wong-Fillmor, L. (1991). Second language learning in children: A model of language learning in social context. In E. Bialystok (Ed). Language Professing in Bilingual Children. Cambridge:University Press. Pp. 49-69.